**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ

ພະແນກພາຍໃນ

ເລກທີ:...1137.../ພນນວ

ນະຄອນຫຼວງວຽງຈັນ, ວັນທີ:.15.ກໍລະກົດ 2024

| | |
|---|---|
| ຂາເຂົ້າ | ສຳນັກງານອົງການປົກຄອງ ນວ<br>ໜ່ວຍງານບໍລິການປະຕູດຽວ |
| ເລກທີ: 3221 | |
| ວັນທີ: 16 - 7 - 2024 | |

**ໜັງສືສະເໜີ**

**ຮຽນ: ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.**

**ເລື່ອງ: ຂໍງົບປະມານຈັດຊື້ ທະນຸບ່າ ໃຫ້ນາຍບ້ານ ແລະ ຮອງນາຍບ້ານ 481 ບ້ານ, 9 ຕົວເມືອງ ທີ່ວນະຄອນຫຼວງວຽງຈັນ.**

- ອີງຕາມ ຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກພາຍໃນນະຄອນຫຼວງວຽງຈັນ ສະບັບເລກທີ 1095/ຈນວ, ລົງວັນທີ 21 ທັນວາ 2022;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງພາຍໃນ ວ່າດ້ວຍການຄຸ້ມຄອງ, ການນຳໃຊ້ເຄື່ອງແບບຂອງນາຍບ້ານ ແລະ ຮອງນາຍບ້ານ ສະບັບເລກທີ 670/ພນ, ລົງວັນທີ 19 ກໍລະກົດ 2023;
- ອີງຕາມ ມະຕິກອງປະຊຸມອົງການປົກຄອງນະຄອນຫຼວງວຽງຈັນ ຄັ້ງທີ 28, ສະບັບເລກທີ 10/ອປຄ.ນວ, ລົງວັນທີ 3 ຕຸລາ 2023;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບ ຂອງກອງປະຊຸມປຶກສາຫາລືກ່ຽວກັບການຄຸ້ມຄອງການນຳໃຊ້ເຄື່ອງແບບນາຍບ້ານ ແລະ ຮອງນາຍບ້ານ ຮ່ວມກັບທ່ານຮອງເລຂາພັກເມືອງ, ທ່ານຮອງເຈົ້າເມືອງ ແລະ ຫ້ອງການພາຍໃນ 9 ເມືອງ ທີ່ວນະຄອນຫຼວງວຽງຈັນ ຄັ້ງວັນທີ 20 ມິຖຸນາ 2024.

ພະແນກພາຍໃນນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນສະເໜີມາຍັງ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ **ເພື່ອຂໍງົບປະມານຈຳນວນ 414,862,500 ກີບ (ສີ່ຮ້ອຍສິບສີ່ລ້ານແປດແສນຫົກສິບສອງພັນຫ້າຮ້ອຍກີບ),** ຈັດຊື້ທະນຸບ່າ ຈຳນວນທັງໝົດ 2,405 ຄູ່ ໃຫ້ນາຍບ້ານ ແລະ ຮອງນາຍບ້ານ ທັງໝົດ 2,405 ທ່ານ, ຍິງ 581 ທ່ານ, ໃນ 481 ບ້ານ, 9 ຕົວເມືອງ ທີ່ວນະຄອນຫຼວງວຽງຈັນ (ໝາຍເຫດ: ລາຄາທະນຸບ່າແມ່ນຢູ່ໃນກອບເວລາ 45 ວັນ, ເລີ່ມແຕ່ມື້ທີ່ໂຮງງານຕັດຫຍິບ ສະເໜີລາຄາເປັນຕົ້ນໄປ ເນື່ອງຈາກວ່າຄ່າເງິນມີການເໜັງຕີງຂຶ້ນຢ່າງໄວຕາມອັດຕາແລກປ່ຽນເງິນຕາຕ່າງປະເທດ ເພາະໃນເດືອນກໍລະກົດ 2023 ຜ່ານມາໄດ້ຮັບການແຈ້ງລາຄາຈາກກະຊວງພາຍໃນແມ່ນ 70,000 ກີບ, ມາຮອດປັດຈຸບັນລາຄາແມ່ນ 172,500 ກີບ).

ຜ່ານການປັບປຸງອົງການປົກຄອງບ້ານຢູ່ 9 ເມືອງ ໃນນະຄອນຫຼວງວຽງຈັນ ແມ່ນເລີ່ມແຕ່ ທ້າຍປີ 2023 ຫາ ເດືອນກໍລະກົດ 2024 ປະຈຸບັນສາມາດປັບປຸງອົງການປົກຄອງບ້ານໄດ້ 471 ບ້ານ, ເທົ່າກັບ 97.92%, ບ້ານທີ່ຍັງບໍ່ທັນປັບປຸງມີ 10 ບ້ານ, ເທົ່າກັບ 2.08%, ນາຍບ້ານຄວບເລຂາໜ່ວຍພັກມີ 462 ທ່ານ, ຍິງ 70 ທ່ານ ນາຍບ້ານບໍ່ຄວບເລຂາໜ່ວຍພັກມີ 9 ທ່ານ ຍິງ 1 ທ່ານ, ຄາດຄະເນການປັບປຸງ

ອົງການປົກຄອງບ້ານໃຫ້ສຳເລັດທັງໝົດ 481 ບ້ານ ທົ່ວນະຄອນຫຼວງວຽງຈັນ ໃນທ້າຍເດືອນສິງຫາ 2024 ນີ້, ເພື່ອເປັນການຈັດຕັ້ງປະຕິບັດຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງພາຍໃນ ສະບັບເລກທີ 670/ພນ, ແລະ ມະຕິກອງປະຊຸມອົງການປົກຄອງນະຄອນຫຼວງວຽງຈັນ ຄັ້ງທີ 28, ສະບັບເລກທີ 10/ອປຄ.ນວ, ພະແນກພາຍໃນນະຄອນຫຼວງວຽງຈັນ ໃນນາມເປັນເສນາທິການໃນການຊຸກຍູ້, ຕິດຕາມການປັບປຸງອົງການປົກຄອງບ້ານ, ເຫັນວ່າມີຄວາມຈຳເປັນຈັດຊື້ທະນູບ່າໃຫ້ຄະນະບ້ານໃຫ້ທັນສະພາບການພາຍຫຼັງທີ່ໄດ້ປັບປຸງອົງການປົກຄອງບ້ານ ທົ່ວນະຄອນຫຼວງວຽງຈັນ ສຳເລັດແລ້ວ. ສຳລັບເຄື່ອງແບບນາຍບ້ານ-ຮອງນາຍບ້ານແມ່ນໄດ້ມອບໃຫ້ອົງການປົກຄອງເມືອງຊຸກຍູ້ ຫຼື ບ້ານໃດມີເງື່ອນໄຂທາງດ້ານເສດຖະກິດແມ່ນໃຫ້ກຸ້ມຕົນເອງໃນການຕັດເຄື່ອງແບບ.

ເພື່ອປະຕິບັດຕາມລະບຽບການ ພະແນກພາຍໃນນະຄອນຫຼວງວຽງຈັນ ໄດ້ລົງເກັບກຳຂໍ້ມູນ, ສອບຖາມລາຄານຳໂຮງງານຜະລິດທະນູບ່າ, ຈຳນວນທັງໝົດ 3 ໂຮງງານ ຄື: 1).ໂຮງງານ ຕັດຫຍິບ ຣົກກາຣໂດກາເມັ້ນ; 2)ໂຮງງານ ຕັດຫຍິບ ວານິສາ; ແລະ 3). ໂຮງງານ ຕັດຫຍິບ ກຽນສັນຕິສຸກ. ທັງສາມໂຮງງານລ້ວນແລ້ວແຕ່ສະເໜີລາຄາທີ່ແຕກຕ່າງກັນ, ໃນນີ້ໂຮງງານທີ່ສະເໜີລາຄາຖືກກວ່າ ແມ່ນໂຮງງານຕັດຫຍິບກຽນສັນຕິສຸກ ຊຶ່ງເປັນໂຮງງານທີ່ໃຫຍ່ ແລະ ໄດ້ມາດຕະຖານ ທັງເປັນຜູ້ຮັບຜິດຊອບຜະລິດ ແລະ ຕັດຫຍິບເຄື່ອງແບບ ແລະ ທະນູບ່າ ໃຫ້ກະຊວງປ້ອງກັນຄວາມສະຫງົບ. ສະນັ້ນ, ຕາມທັດສະນະວິຊາການພະແນກພາຍໃນນະຄອນຫຼວງວຽງຈັນ ຈຶ່ງເຫັນຄວນຄັດເລືອກ ເອົາໂຮງງານຕັດຫຍິບ ກຽນສັນຕິສຸກ ເປັນຜູ້ຜະລິດທະນູບ່າ ໃຫ້ນາຍບ້ານ ແລະ ຮອງນາຍບ້ານ 481 ບ້ານ, 9 ຕົວເມືອງ ທົ່ວນະຄອນຫຼວງວຽງຈັນ. (ລາຍລະອຽດມີໃບສະເໜີລາຄາ ຂອງ 3 ໂຮງງານ, ແລະ ແຜນການຈັດຊື້ທະນູບ່າ ຂອງພະແນກພາຍໃນ ນວ ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມລະບຽບການດ້ວຍ.

**ຫົວໜ້າພະແນກ**

ພະແນກພາຍໃນ

ນ. ສຸມາລີ ທຳມະວົງ

ເອກະສານຄັດຕິດ:

| | |
|---|---|
| - ຂໍ້ຕົກລົງ ສະບັບເລກທີ 670/ພນ, | 1 ສະບັບ; |
| - ມະຕິກອງປະຊຸມ ສະບັບເລກທີ 10/ອປຄ.ນວ | 1 ສະບັບ; |
| - ໃບສະເໜີລາຄາຂອງ 3 ຮ້ານ | 1 ສະບັບ; |
| - ແຜນຈັດຊື້ | 1 ສະບັບ. |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກພາຍໃນ

ເລກທີ.....1138................

ວັນທີ.....15.....ກໍລະກົດ 2024

## ແຜນງົບປະມານຈັດຊື້ທະນູບ່າ ໃຫ້ນາຍບ້ານ ແລະ ຮອງນາຍບ້ານ 481 ບ້ານ ທົ່ວນະຄອນຫຼວງວຽງຈັນ

I. ຄິດໄລ່ຈຳນວນ ແລະ ລາຄາ ທະນູບ່າ ນາຍບ້ານ ແລະ ຮອງນາຍບ້ານ ລະອຽດ.

| ລ/ດ | ລາຍການ | ຈຳນວນ ບ້ານ | ຈຳນວນນາຍບ້ານ | ຈຳນວນຮອງ ນາຍບ້ານ 481 ບ້ານ | ຈຳນວນລວມ ນາຍບ້ານ ແລະ ຮອງ ນາຍບ້ານ | ຈຳນວນຕ້ອງການ ຈັດຊື້ທະນູບ່າ | ລາຄາ ກີບ/1ຄູ່ | ລາຄາລວມ ກີບ |
|---|---|---|---|---|---|---|---|---|
| 1 | ເມືອງ ຈັນທະບູລີ | 30 | 30 | 120 | 150 | 150 | 172,500 | 25,875,000 |
| 2 | ເມືອງ ສີສັດຕະນາກ | 37 | 37 | 148 | 185 | 185 | 172,500 | 31,912,500 |
| 3 | ເມືອງ ໄຊເສດຖາ | 48 | 48 | 192 | 240 | 240 | 172,500 | 41,400,000 |
| 4 | ເມືອງ ສີໂຄດຕະບອງ | 60 | 60 | 240 | 300 | 300 | 172,500 | 51,750,000 |
| 5 | ເມືອງ ນາຊາຍທອງ | 54 | 54 | 216 | 270 | 270 | 172,500 | 46,575,000 |
| 6 | ເມືອງ ຫາດຊາຍຟອງ | 60 | 60 | 240 | 300 | 300 | 172,500 | 51,750,000 |
| 7 | ເມືອງ ໄຊທານີ | 104 | 104 | 416 | 520 | 520 | 172,500 | 89,700,000 |
| 8 | ເມືອງ ປາກງື່ມ | 53 | 53 | 212 | 265 | 265 | 172,500 | 45,712,500 |
| 9 | ເມືອງ ສັງທອງ | 35 | 35 | 140 | 175 | 175 | 172,500 | 30,187,500 |
| ລວມທັງໝົດ = | | **481** | **481 ຍັງ 71** | **1,924 ຍັງ 525** | **2,405 ຍັງ 581** | **2,405 ຍັງ 581** | | **414,862,500** |

**+ ຈຳນວນເງິນທັງໝົດ = 414,862,500 ກີບ**

(ຂຽນເປັນຕົວໜັງສື: ສີ່ຮ້ອຍສິບສີ່ລ້ານແປດແສນຫົກສິບສອງພັນຫ້າຮ້ອຍກີບ).

ຫົວໜ້າພະແນກ

ເຊັນແທນຫົວໜ້າຂະແໜງປົກຄອງ ແລະ ແຜນທີ່

ຮອງຫົວໜ້າຂະແໜງປົກຄອງ ແລະ ແຜນທີ່

ຜູ້ຂຶ້ນແຜນ

ກົມຫຼວງພາຍໃນ ພະແນກ ພາຍໃນ ນະຄອນຫຼວງວຽງຈັນ

ນ. ສຸນາລີ ທຳມະວົງ

ຈັນທະວີ ສີຫາເທບ